ບົດສັງລວມຫຍໍ້ ທີ 4 – ສິດນຳໃຊ້ທີ່ດິນຂອງແມ່ຍິງ
ກ່ຽວກັບມາດຕາ 86

ບັນຫາ

ການຂາດການປົກປ້ອງ ສຳລັບແມ່ຍິງ ແລະ ສິດຂອງເຂົາເຈົ້າ ໃນຮ່າງກົດໝາຍວ່າດ້ວຍທີ່ດິນສະບັບໃໝ່.

ຄວາມເປັນມາ

ບັນດານະ�โยบาย ແລະ ກອບນິຕິກຳ ຂອງ ສປປ ລາວ ຖືໄດ້ວ່າມີຄວາມກ້າວໜ້າທາງດ້ານການສົ່ງເສີມສິດທິຂອງແມ່ຍິງ. ລັດຖະທຳມະນູນ ແຫ່ງ ສປປ ລາວ ໄດ້ຮັບປະກັນຄວາມສະເໝີພາບສຳລັບແມ່ຍິງ ດັ່ງທີ່ໄດ້ກຳນົດໄວ້ໃນ ມາດຕາ 35 ແລະ 37. ນອກນັ້ນ, ຫຼາຍນະ�โยบาย ແລະ ແຜນຂອງລັດຖະບານ ເຊັ່ນ ແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ 8 ໄລຍະ 2016-2020, ກໍ່ໄດ້ມີການກຳນົດບັນດາຄາດໝາຍ ແລະ ເປົ້າໝາຍ ເປັນຢ່າງດີ. ນິຕິກຳຫຼາຍສະບັບຂອງລາວ ເຊັ່ນ ກົດໝາຍ ວ່າດ້ວຍຄອບຄົວ ກໍ່ໄດ້ລະບຸວ່າ ຜົວ ແລະ ເມຍ ມີສິດເທົ່າທຽມກັນໃນການຕັດສິນໃຈ ທີ່ກ່ຽວກັບສິນສົມສ້າງ (ມາດຕາ 26 ແລະ 27) ແລະ ລູກຊາຍ ແລະ ລູກສາວ ມີສິດເທົ່າທຽມກັນໃນການສືບມູນ (ກົດໝາຍວ່າດ້ວຍ ການພັດທະນາ ແລະ ປົກປ້ອງແມ່ຍິງ, ມາດຕາ 17).

ເປົ້າໝາຍການພັດທະນາແບບຍືນຍົງ (SDG) (ຕົວຊີ້ບອກ 1.4.2) ໄດ້ວັດແທກ ຄວາມໝັ້ນຄົງທາງດ້ານການຄອບຄອງນຳໃຊ້ທີ່ດິນ ດ້ວຍເອກະສານທີ່ຮັບຮູ້ຕາມກົດໝາຍ ໂດຍແຍກຕາມເພດ ແລະ ປະເພດຂອງການຄອບຄອງນຳໃຊ້[1]. ເປົ້າໝາຍທີ 5 ວັດແທກແບບສະເພາະເຈາະຈົງວ່າ ***ກຳມະສິດ*** ຫຼື ຄວາມໝັ້ນຄົງຂອງ***ສິດ*** ຕໍ່ກັບ ***ທີ່ດິນ***ກະສິກຳ ມີຫຼາຍປານໃດ, ພ້ອມກັນນັ້ນ ກໍ່ຍັງອີງໃສ່ສັດສ່ວນຂອງແມ່ຍິງທີ່ເປັນເຈົ້າຂອງທີ່ດິນ ອີກດ້ວຍ. ຕົວຊີ້ວັດນີ້ ຊ່ວຍໃຫ້ມີການກວດກາຕິດຕາມຄວາມຄືບໜ້າ ທາງດ້ານຄວາມສະເໝີພາບຍິງ-ຊາຍ ຜ່ານການຮັບຮອງນຳໃຊ້ມາດຕະການທາງດ້ານນິຕິກຳສະເພາະສຳລັບແມ່ຍິງ ເພື່ອຮັບປະກັນສິດຂອງແມ່ຍິງ ຕໍ່ທີ່ດິນ.
ກົດໝາຍວ່າດ້ວຍ ທີ່ດິນ ປີ 2003 ມີໝວດມາດຕາ ທີ່ກ່ຽວກັບການປົກປ້ອງສິດຂອງແມ່ຍິງທີ່ແຕ່ງງານແລ້ວ. ມາດຕາ 43 ໄດ້ລະບຸວ່າ ຕ້ອງບັນທຶກທັງຊື່ຂອງຜົວ ແລະ ເມຍ ໃນເອກະສານສິດນຳໃຊ້ທີ່ດິນ ຖ້າຫາກທີ່ດິນດັ່ງກ່າວເປັນສິນສົມສ້າງ.

---

[1] ຕົວຊີ້ວັດ SDG 1.4.2: ສັດສ່ວນພົນລະເມືອງທີ່ເປັນຜູ້ໃຫຍ່ທັງໝົດ ມີຄວາມໝັ້ນຄົງທາງດ້ານສິດຄອບຄອງນຳໃຊ້ທີ່ດິນ, ໂດຍມີເອກະສານທີ່ຮັບຮູ້ຕາມກົດໝາຍ ແລະ ເປັນຜູ້ທີ່ຮູ້ສຶກວ່າຕົນມີຄວາມໝັ້ນຄົງທາງດ້ານການຄອບຄອງນຳໃຊ້ທີ່ດິນ, ໂດຍແຍກຕາມເພດ ແລະ ປະເພດການຄອບຄອງນຳໃຊ້.

ບັນຫາ

ການຂຶ້ນທະບຽນທີ່ດິນ. ຮ່າງກົດໝາຍທີ່ດິນ ບໍ່ໄດ້ມີການປົກປ້ອງສຳລັບແມ່ຍິງທີ່ແຕ່ງງານແລ້ວ ດັ່ງທີ່ມີຢູ່ແລ້ວໃນກົດໝາຍສະບັບປະຈຸບັນ. ຮ່າງກົດໝາຍທີ່ດິນ ໄດ້ຕັດເອົາການກ່າວເຖິງ ການໃສ່ຊື່ຜົວ ແລະ ເມຍ ໃນກໍລະນີເປັນສິນສົມສ້າງ ອອກ. ບົດບັນຍັດດັ່ງກ່າວ ໄດ້ຖືກລະບຸຢ່າງສະເພາະເຈາະຈົງໃນກົດໝາຍສະບັບປີ 2003, ເພື່ອແກ້ໄຂກໍລະນີ ທີ່ມີແຕ່ຫົວໜ້າຄອບຄົວໄດ້ຮັບການຂຶ້ນທະບຽນເປັນເຈົ້າຂອງ, ເຖິງວ່າຜູ້ເປັນຜົວ (ຫຼື ເມຍ) ບໍ່ໄດ້ແມ່ນເຈົ້າຂອງເດີມກ່ອນການແຕ່ງງານ ກໍ່ຕາມ. ໃນກໍລະນີດັ່ງກ່າວ, ຜູ້ທີ່ເປັນເຈົ້າຂອງເດີມ ໂດຍສະເພາະແມ່ຍິງຈະເສຍປຽບຫຼາຍ ຖ້າຫາກວ່າໃບຕາດິນອອກຊື່ໃນລະດັບຄົວເຮືອນ. ຜົນຂອງການສຶກສາ (Loes Schenk Sandbergen, 2005) ສະແດງໃຫ້ເຫັນວ່າ ໃບຕາດິນມັກຈະອອກຊື່ຜົວເທົ່ານັ້ນ ເຊິ່ງມີຜົນເຮັດໃຫ້ເມຍບໍ່ໄດ້ຮັບສ່ວນແບ່ງທີ່ດິນ ໃນກໍລະນີເກີດມີການຢ່າຮ້າງ.

ນອກນັ້ນ, ຮ່າງກົດໝາຍທີ່ດິນ ບໍ່ໄດ້ມີບົດບັນຍັດ ທີ່ຮັບປະກັນ ຫຼື ສົ່ງເສີມແມ່ຍິງ ໃຫ້ເປັນຜູ້ຖືຄອງສິດນຳໃຊ້ທີ່ດິນ. ເນື່ອງຈາກວ່າແມ່ຍິງປະເຊີນກັບສິ່ງທ້າທາຍຫຼາຍກວ່າ, ດັ່ງນັ້ນ ການລະບຸຢ່າງສະເພາະເຈາະຈົງ ໃຫ້ແມ່ຍິງ, ລວມທັງແມ່ຍິງທີ່ເປັນໂສດ, ຢ່າຮ້າງ ຫຼື ເປັນໝ້າຍ ສາມາດໄດ້ຮັບສິດນຳໃຊ້ທີ່ດິນ ຈຶ່ງຖືເປັນວິທີການທີ່ດີທີ່ສຸດ.

ການຍິນຍອມ ຕໍ່ກັບການເຮັດທຸລະກຳທາງດ້ານທີ່ດິນ. ບໍ່ໄດ້ມີການລະບຸໃນຮ່າງກົດໝາຍທີ່ດິນວ່າ ຄວນມີການຍິນຍອມ ລະຫວ່າງຜົວ ແລະ ເມຍ ໃນການດຳເນີນທຸລະກຳຕໍ່ກັບທີ່ດິນທີ່ເປັນສິນສົມສ້າງ. ໃນຄວາມເປັນຈິງ, ເຄີຍມີກໍລະນີ ທີ່ ແມ່ຍິງບໍ່ໄດ້ຮັບການແຈ້ງວ່າ ຜົວຕົນຂາຍທີ່ດິນ.

ຂໍ້ສະເໜີ

ເນື້ອໃນມາດຕາ 43 ຂອງກົດໝາຍ ວ່າດ້ວຍທີ່ດິນ ສະບັບປີ 2003 ຄວນສະທ້ອນຢູ່ໃນມາດຕາ 86 ຂອງຮ່າງກົດໝາຍທີ່ດິນ; ເວົ້າສະເພາະກໍ່ຄື ຄວນບັນທຶກ ຊື່ຂອງທັງຂອງຜົວ ແລະ ເມຍ ສຳລັບທີ່ດິນທີ່ເປັນສິນສົມສ້າງ. ການກຳນົດດັ່ງກ່າວຈະເຮັດໃຫ້ມີຄວາມຈະແຈ້ງວ່າ ທັງຜົວ ແລະ ເມຍຈະໄດ້ຮັບການຂຶ້ນທະບຽນເປັນເຈົ້າຂອງ, ບໍ່ແມ່ນພຽງແຕ່ຜູ້ດຽວທີ່ຕາງໜ້າຄອບຄົວ.

ກົດໝາຍທີ່ດິນຂອງຫວຽດນາມ ປີ 2013 (ມາດຕາ 95 ແລະ 98) ເປັນແນວທາງທີ່ດີ ສຳລັບສິ່ງທີ່ຄວນປະກອບເຂົ້າ ໃນ

ກົດໝາຍ. ໃນ ກົດໝາຍວ່າດ້ວຍການເຮັດສັນຍາທີ່ດິນຊົນນະບົດ ຂອງຈີນ, ໄດ້ຮັບຮອງການດັດແກ້ວ່າ ຊື່ຂອງແມ່ຍິງ ຄວນໄດ້ຮັບການຂຶ້ນທະບຽນ ຢູ່ໃນໃບຢັ້ງຢືນການນຳໃຊ້ທີ່ດິນ. ໃນເມື່ອກ່ອນ, ມີແຕ່ຜູ້ທີ່ລະບຸເປັນຫົວໜ້າຄອບຄົວເທົ່ານັ້ນ (ປົກກະຕິຈະແມ່ນຜູ້ຊາຍ) ທີ່ມີຊື່ໃນໃບຢັ້ງຢືນການນຳໃຊ້ທີ່ດິນຂອງຄົວເຮືອນ. ກົດໝາຍສະບັບປັບປຸງ ຍັງກຳນົດຢ່າງຈະແຈ້ງວ່າ ສະມາຊິກຄົວເຮືອນທັງຊາຍ ແລະ ຍິງ ມີສິດເທົ່າທຽມກັນຕໍ່ກັບທີ່ດິນຂອງຄົວເຮືອນ. ໃນປະເທດຈີນ, ອີງຕາມປະເພນີແລ້ວ ແມ່ຍິງທີ່ແຕ່ງງານໃໝ່ຈະຕ້ອງຍ້າຍເຂົ້າໄປຢູ່ໝູ່ບ້ານຂອງຜົວ, ແມ່ຍິງ ມັກຈະມີຄວາມສ່ຽງທີ່ຈະຖືກປະຕິເສດສິດຕໍ່ກັບສ່ວນແບ່ງໃນທີ່ດິນຄົວເຮືອນດັ່ງກ່າວ. ການດັດແກ້ສິດເທົ່າທຽມ ຮັບປະກັນຄວາມສະເໝີພາບຂອງແມ່ຍິງໃນສ່ວນແບ່ງທີ່ດິນຄົວເຮືອນ ແລະ ຮັບປະກັນວ່າ ພວກເຂົາຈະຮັກສາສິດດັ່ງກ່າວໄວ້ ໃນກໍລະນີມີການຢ່າຮ້າງ.

ການປ່ຽນແປງອື່ນທີ່ຄວນປະກອບຢູ່ໃນກົດໝາຍ ມີດັ່ງນີ້:

- ນຳໃຊ້ບາງເນື້ອໃນທີ່ຢູ່ໃນ ມາດຕາ 5 ປະຈຸບັນ (ກົດໝາຍວ່າດ້ວຍ ທີ່ດິນ ປີ 2003) ກ່ຽວກັບການຮັບປະກັນ ການປົກປ້ອງຜົນປະໂຫຍດຂອງຜູ້ຖືສິດນຳໃຊ້ທີ່ດິນ ຕາມລັດຖະທຳມະນູນ. ຕົວຢ່າງ, ມາດຕາ 7 ໃໝ່ ອາດເວົ້າວ່າ "ໂດຍອີງຕາມລັດຖະທຳມະນູນ, ລັດ ຮັບຮູ້ ແລະ ປົກປ້ອງສິດສະເໝີພາບຍິງ-ຊາຍ ຕໍ່ກັບທີ່ດິນ, ລວມທັງສິດໄດ້ຮັບການຈັດສັນທີ່ດິນ."
- ລະບຸຈະແຈ້ງ ໃນມາດຕາ 116 ໃໝ່ (ກ່ຽວກັບການໄດ້ຮັບສິດນຳໃຊ້ທີ່ດິນ) ວ່າ ແມ່ຍິງ ສາມາດໄດ້ຮັບສິດນຳໃຊ້ທີ່ດິນ ໂດຍບໍ່ກ່ຽວກັບສະຖານະພາບການແຕ່ງງານຂອງເຂົາເຈົ້າ.
- ເພີ່ມເນື້ອໃນຕໍ່ກັບບົດບັນຍັດກ່ຽວກັບການກວດກາຕິດຕາມ ໃນມາດຕາ 82 ໃໝ່ ເພື່ອໃຫ້ມີການເກັບກຳ ແລະ ລາຍງານຂໍ້ມູນ ໂດຍແຍກຕາມເພດ (ໝາຍວ່າ ສະຖິຕິຈະຕ້ອງສະແດງຈຳນວນ ຊາຍ ແລະ ຍິງ), ແລະ ກຳນົດໃຫ້ມີການເຜີຍແຜ່ຂໍ້ມູນດັ່ງກ່າວ. ສິ່ງດັ່ງກ່າວມີຄວາມສຳຄັນ ໂດຍສະເພາະໃນການວັດແທກຄວາມຄືບໜ້າຂອງເປົ້າໝາຍ SDG (1.4.2 ແລະ 5)
- ມາດຕາ 96 ແລະ 97 ຄວນມີ ການລະບຸໃຫ້ທັງຜົວ ແລະ ເມຍ ໃຫ້ການຍິນຍອມໃນທຸລະກຳຕໍ່ກັບທີ່ດິນທີ່ເປັນສິນສົມສ້າງ.